## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 13 ກໍຣະກະດາ 2008 ( 07-13-2008 )

---

# <u>ການຕໍ່ສູ້ພຣະຄຣິດເດ ເປັນແນວໃດ?</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: ພຣະນິມິດ 13:1-10, 16-18
**<u>ຄຳຖາມແຫ່ງຊີວິດ</u>**: ພວກທີ່ຕໍ່ສູ້ພຣະຄຣິດຈະເຮັດຫຍັງແດ່?
**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພວກຕໍ່ສູ້ພຣະຄຣິດຈະເປັນຜູ້ນຳພາໂລກນະມັສການຊາຕານ, ຕໍ່ຕ້ານພຣະເຈົ້າ ແລະຂົ່ມເຫງບັນດາຜູ້ທີ່ເຊື່ອ.
**<u>ຜົນສະທ້ອນຕໍ່ຊີວິດ</u>**: ບົດຮຽນນີ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ດຳເນີນຊີວິດທີ່ມີຄວາມຄິດເຣື່ອງວັນສຸດທ້າຍຢູ່ໃນໃຈດຍ....

- ມີຄວາມເຂົ້າໃຈວ່າພວກທີ່ຕໍ່ສູ້ພຣະຄຣິດຈະເຮັດຫຍັງແດ່ ແລະ...
- ຕັດສິນໃຈທີ່ຈະຕໍ່ຕ້ານກັບຄວາມຊົ່ວຮ້າຍໃນທຸກຮູບແບບ.

ໃນຖານະທີ່ເປັນນັກກິລາໃນໂຮງຮຽນວິທຍາລັຍພ້ອມທັງມີຄວາມເຊື່ອໃໝ່ໃນພຣະຄຣິດ, ຂ້າພະເຈົ້າພຍາຍາມແບ່ງປັນຄວາມເຊື່ອກັບຄົນອື່ນໆ. ຄັ້ງນຶ່ງທີ່ຂ້າພະເຈົ້າໄດ້ມີໂອກາດເປັນພຍານ ໄດ້ມີຜູ້ໂຕ້ຕອບທີ່ເຮັດໃຫ້ຂ້າພະເຈົ້າງຶງງວຍ, *"ຂ້ອຍບໍ່ຢາກໄດ້ຍິນເຣື່ອງນັ້ນ, ຂ້ອຍແມ່ນຝ່າຍກົງກັນຂ້າມ, ຂ້ອຍໄດ້ຂໍໃຫ້ຜີຮ້າຍເຮັດໃຫ້ຂ້ອຍເປັນຄົນທີ່ດື້ດຶງແລະໂຫດຮ້າຍຂຶ້ນຕື່ມ."* ທຸກຄົນທີ່ໄດ້ຍິນເຖິງກັບຕົກຕະລຶງ. ຂ້າພະເຈົ້າບໍ່ແນ່ໃຈວ່າຊາຍໜຸ່ມຄົນນັ້ນເວົ້າຈິງຫລືລາວພຽງແຕ່ຢາກຫລີກລ້ຽງທີ່ຈະປະເຊີນກັບຂ່າວປະເສີດ.

ເປັນຫຍັງພວກເຮົາຈຶ່ງປລາດໃຈທີ່ໄດ້ພົບກັບຄົນທີ່ຢາກໄດ້ຮັບພລັງອຳນາດຈາກຊາຕານ? ບົດຮຽນນີ້ຈະນຳພາຜູ້ທີ່ເຊື່ອໄປພົບກັບເຣື່ອງນີ້ກ່ຽວກັບວັນສຸດທ້າຍ. ການນຳມາໃຊ້ໃນຊີວິດຈະສາມາດຊ່ອຍໃຫ້ເຮົາຕັດສິນໃຈ ທີ່ຈະຮູ້ວິທີແລະຕໍ່ຕ້ານກັບຄວາມຊົ່ວຮ້າຍໃນທຸກຮູບແບບ.

### ສຶກສາພຣະຄັມພີ

1. **<u>ມະນຸດຜູ້ປະຊາສັມພັນຂອງຊາຕານ.</u>** (ພຣະນິມິດ 13:1-6 )

ພາບທາງຍຸທສາດຂອງບົດຮຽນນີ້ແມ່ນ**ສັດຮ້າຍ**ຕົວນຶ່ງຊຶ່ງຂຶ້ນມາຈາກ**ທະເລ**. ລັກສະນະຂອງສັດນັ້ນຕີຄວາມໝາຍໄດ້ຫລາຍຢ່າງ: ບາງຄົນເຫັນວ່າມັນເປັນສິ່ງທີ່ບໍ່ມີຕົວຕົນເຊັ່ນອານາຈັກໂຣມັນ ຫລືເປັນເໝືອນຣັຖບານທີ່ບໍ່ມີພຣະເຈົ້າໃນອະນາຄົດ. ບັນດາຜູ້ທີ່ເຫັນເຫດການອີງຕາມຖ້ອຍຄຳດັ່ງກ່າວນີ້ແມ່ນກ່ຽວຂ້ອງກັບເຫດການໃນສັຕວັດທີນຶ່ງຊຶ່ງໃນພາບນີ້ເຂົ້າໃຈວ່າແມ່ນກະສັດນີໂຣ ຫລືຣັຖບານທີ່ຖ່ອຍຮ້າຍທົ່ວໆ ໄປ. ການສຶກສາບົດຮຽນນີ້ຈະເຫັນວ່າສັດຮ້າຍ ໄດ້ມີສ່ວນຮ່ວມກັບບຸກຄົນຜູ້ນຶ່ງໃນວັນສຸດທ້າຍທີ່ໄດ້ຮັບຣິດອຳນາດຈາກຊາຕານຊຶ່ງເອີ້ນກັນວ່າຜູ້ທີ່ຕໍ່ສູ້ພຣະຄຣິດ. ໃນຊ່ວງເວລາທີ່ຜ່ານມາເຮົາສາມາດເອີ່ຍຊື່ໄດ້ເຊັ່ນ ຮິດເລີ, ສະຕາລິນ, ໂອສມາ ບິນລາເດັນ ແລະຫລາຍໆ ຄົນທີ່ມີຊື່ໃນ ປະວັດສາດກ່ຽວກັບເຣື່ອງນີ້.

ທີ່ມາຂອງສັດຮ້າຍນີ້ແມ່ນທະເລ. ຊຶ່ງເປັນເຄື່ອງໝາຍຂອງຄວາມຊົ່ວຮ້າຍອັນໃຫຍ່ຫລວງທີ່ຈະມາເຖິງ. ລັກສະນະຂອງມັນແມ່ນຜູ້ຕໍ່ສູ້ພຣະຄຣິດ ຊຶ່ງໄດ້ຮັບຣິດອຳນາດຈາກຜູ້ທີ່ມີ**ຊື່ທີ່ເປັນຄຳໝິ່ນປມາດ** ທີ່ຢູ່ເທິງຫົວຂອງມັນ ແທ້ຈິງແລ້ວແມ່ນ**ພຍານາກເປັນຜູ້ໃຫ້ຣິດອຳນາດແກ່ມັນ**. ໃນພຣະທັມ 1 ເທຊະໂລນິກ 2:9 ໄດ້ບອກພວກເຮົາວ່າ *"ຜູ້ຊົ່ວຮ້າຍນັ້ນຈະມາດ້ວຍການດົນບັນດານຂອງຊາຕານ ພ້ອມດ້ວຍຣິດອຳນາດທຸກຢ່າງ ແລະດ້ວຍໝາຍສຳຄັນກັບການອັສຈັນທີ່ຫລອກລວງ."*

ການສຶກສາຂອງພວກເຮົາຈະບໍ່ພະຍາຍາມຄົ້ນຫາຂໍ້ມູນທີ່ແນ່ນອນກ່ຽວກັບເຂົາ 10 ເຂົາ ແລະຫົວ 7 ຫົວ ແຕ່ຈະສຶກສາເບິ່ງແຫລ່ງທີ່ມາ, ລັກສະນະ ແລະຂອບເຂດຈຳກັດຂອງຣິດອຳນາດຂອງສັດຮ້າຍນັ້ນ. ຄົນທັງໂລກທີ່ຕິດຕາມຜູ້ຕໍ່ສູ້ພຣະຄຣິດຈະຖືກຫລອກຢ່າງງ່າຍດາຍ. ຄົນໃນໂລກທີ່ບໍ່ເຊື່ອໃນພຣະເຈົ້າຈະຖືກຫລອກລວງແລະຈະຖືກຊັກຈູງໄປຕິດຕາມສິ່ງຕົນປະທັບໃຈ ແທ້ຈິງແລ້ວແມ່ນຄຳສອນປອມ

ການລະວັງທີ່ຈະຖືກຫລອກລວງແລະຮັບເອົາຄຳສອນປອມເປັນສິ່ງທີ່ສຳຄັນຕໍ່ບັນດາຜູ້ຕິດຕາມອົງພຣະຄຣິດ. ຊາຕານພະຍາຍາມທີ່ຈະສືບຕໍ່ຫລອກລວງ, ປະຕິເສດ, ແລະໃນທີ່ສຸດມັນຈະທຳລາຍຄວາມຈິງຂອງພຣະເຈົ້າ (ເຮັດໃຫ້ຄົນຂອງພຣະເຈົ້າຫັນໜີໄປຈາກຄວາມຈິງ) ການສຶກສາພຣະຄັມພີຂອງພວກເຮົາຈະເຫັນເຖິງຄວາມພະຍາຍາມຄັ້ງສຸດທ້າຍຂອງມັນ ກ່ອນທີ່ມັນຈະເຂົ້າໄປສູ່ຄວາມຕາຍອັນຕລອດໄປ ( ພຣະນິມິດ20:10, 14 ). ການມີສະຕິປັນຍາເປັນສິ່ງທີ່ຈຳເປັນສຳລັບຜູ້ທີ່ເຊື່ອທັງຫລາຍ. ຜູ້ຕໍ່ສູ້ພຣະຄຣິດຈະໄດ້ຮັບອະນຸຍາດໃຫ້ຫລອກລວງເປັນເວລາ **42 ເດືອນ.**
ໃນບົດຮຽນນີ້ພວກເຮົາສາມາດຮຽນຮູ້ໄດ້ດັ່ງນີ້:

1. ດ້ວຍຣິດອຳນາດຂອງຊາຕານ ຜູ້ຕໍ່ສູ້ພຣະຄຣິດຈະຊັກຈູງຜູ້ທີ່ບໍ່ເຊື່ອພຣະເຈົ້າໃນໂລກໃຫ້ຕິດຕາມຊາຕານ ແລະຕໍ່ຕ້ານພຣະເຈົ້າ.
2. ເຖິງແມ່ນວ່າຜູ້ຕໍ່ສູ້ພຣະຄຣິດຈະມີຣິດອຳນາດ ແຕ່ມັນຈະບໍ່ມີຣິດອຳນາດສູງສຸດ ເພາະວ່າຣິດອຳນາດສູງສຸດເປັນຂອງອົງພຣະເຢຊູຄຣິດເທົ່ານັ້ນ ( ມັດທາຍ 28:18)
3. ການຫລອກລວງແລະການດູໝິ່ນກໍຢູ່ໃນຂອບເຂດຈຳກັດ. ຜູ້ຕໍ່ສູ້ພຣະຄຣິດມີເວລາຈຳກັດຕາມທີ່ພຣະເຈົ້າໄດ້ອະນຸຍາດເທົ່ານັ້ນ. ພຣະເຈົ້າເທົ່ານັ້ນທີ່ມີຣິດອຳນາດສູງສຸດບໍ່ຈຳກັດເວລາ.
4. ຜູ້ທີ່ເຊື່ອຄວນຈະປະຕິເສດບໍ່ຍອມຮັບຄຣູສອນແລະຄຳສອນທີ່ບໍ່ໃຫ້ກຽດ, ບໍ່ໂຄຣົບຄວາມຍິ່ງໃຫຍ່ແລະຄວາມເປັນພຣະເຈົ້າຂອງພຣະອົງ.

ວຽກງານຂອງຊາຕານຈະປາກົດໃຫ້ເຫັນໂດຍບໍ່ຈຳກັດ. ສ່ວນຫລາຍບັນດາຄຣິສຕຽນຈະບໍ່ຖືກຊັກຈູງໄປນະມັສການຊາຕານ. ຕາມທັມດາແລ້ວຍຸທວິທີຂອງມັນທີ່ມີຕໍ່ບັນດາຜູ້ທີ່ເຊື່ອ ແມ່ນການກະທຳແບບລັບໆ, ນີ້ມນອມ ແລະຫລອກລວງ. ຄຣິສຕຽນທີ່ສລາດຄວນຈະຕັດສິນໃຈທີ່ຈະນະມັສການພຣະເຈົ້າແລະພຣະຜູ້ໂຜດໃຫ້ພົ້ນເທົ່ານັ້ນ ຄືອົງພຣະເຢຊູຄຣິດ.

## 2. <u>ການປົກຄອງຊ່ວງສຸດທ້າຍອັນປລາດ</u> (ພຣະນິມິດ 13:7ຂ-8, 16-18 )

ທຸກຄົນຮູ້ຈັກດີເຣື່ອງຜູ້ກົດຂີ່ຂົ່ມເຫງແລະຜູ້ທີ່ຄວບຄຸມ ຊຶ່ງອາດຈະເປັນຜົວຫລືເມັຽ, ນາຍ, ໝູ່ເພື່ອນ, ຫລືແມ່ນແຕ່ນັກການເມືອງ. ການໃຊ້ອຳນາດຂອງຜູ້ຕໍ່ສູ້ພຣະຄຣິດກໍເປັນເຊັ່ນດຽວກັນນີ້ຄົນທັງໂລກຈະຕິດຕາມມັນ. ເບິ່ງຄືວ່າມັນມີພລັງແລະຣິດອຳນາດທັງໝົດ.

ຄຣິສຕຽນຈະຕ້ອງຈື່ໄວ້ສເມີວ່າຜູ້ທີ່ມີຣິດອຳນາດສູງສຸດນັ້ນແມ່ນພຣະເຈົ້າພຽງອົງດຽວ. ເຮົາຈະເຫັນວ່າສັດຮ້າຍທີ່ມີ**ຣິດອຳນາດ**ນັ້ນ ໃນທີ່ສຸດມັນກໍມີຣິດອຳນາດທີ່ຈຳກັດ. ຣິດອຳນາດທີ່ຈຳກັດຂອງຜູ້ທີ່ຕໍ່ສູ້ພຣະຄຣິດທີ່ມີຢູ່ນັ້ນໄດ້ກ່າວໄວ້ວ່າເປັນຣິດອຳນາດ "ທີ່ຊົງປະທານໃຫ້" ໃນຂໍ້ທີ 7ກ. ຊາຕານເປັນຜູ້ໃຫ້ຣິດອຳນາດແກ່ຜູ້ຕໍ່ສູ້ພຣະຄຣິດແຕ່ວ່າຣິດອຳນາດນັ້ນມີຄວາມຈຳກັດ. ເຖິງຢ່າງໃດກໍຕາມ ບັນດາຜູ້ທີ່ເຊື່ອຄວນຈະໄດ້ຮັບການໜູນໃຈທີ່ຮູ້ວ່າພຣະເຢຊູຊົງມີຣິດອຳນາດອັນບໍ່ມີຂອບເຂດຈຳກັດ.

ຜູ້ທີ່ເຊື່ອບໍ່ຄວນມີຄວາມກັງວົນໃຈ ເພາະພວກເຮົາຮູ້ດີແລ້ວວ່າບັນດາຜູ້ເປັນໄພ່ພົນຂອງພຣະຄຣິດຈະບໍ່ຖືກຫລອກລວງ. ສັດຮ້າຍມີຣິດອຳນາດທີ່ໄດ້ຮັບຈາກຊາຕານເທົ່ານັ້ນ ເຖິງແມ່ນວ່າຣິດອຳນາດນັ້ນຈະຍິ່ງໃຫຍ່ກໍຕາມ. ຜູ້ຕໍ່ສູ້ພຣະຄຣິດຈະໃຊ້ຄວາມພະຍາຍາມອັນຊົ່ວຮ້າຍໃນການຫລອກລວງ ແຕ່ມັນບໍ່ສາມາດເອົາຊະນະຈິດໃຈຂອງບັນດາຜູ້ທີ່ບັງເກີດໃໝ່ທາງດ້ານຈິດວິນຍານໄດ້. ໂດຍພຣະຄຸນຂອງພຣະເຈົ້າ, ພຣະອົງຈະຊົງປົກປ້ອງຄຸ້ມຄອງບັນດາຜູ້ທີ່ມີຊື່ຈົດໄວ້ໃນ**ປື້ມແຫ່ງຊີວິດຂອງພຣະເມສານ້ອຍ.**

ບັນດາຜູ້ທີ່ເຊື່ອທີ່ມີຄວາມປອດພັຍແລ້ວຈະກັບກາຍເປັນຜູ້ທີ່ໄດ້ຮັບເຄາະ ຊຶ່ງຈະໄດ້ເນັ້ນໃຫ້ຮູ້ຕໍ່ໄປ ຕາມຖ້ອຍຄຳທີ່ກ່າວວ່າ "ຕັ້ງແຕ່ຊົງສ້າງໂລກ." ວັນສຸດທ້າຍໃນການຫລອກລວງຂອງຊາຕານໂດຍທາງຜູ້ຕໍ່ສູ້ພຣະຄຣິດຈະເພີ່ມ

ທະວີຂຶ້ນ, ແຕ່ຈະບໍ່ສາມາດເຮັດໃຫ້ຄຣິສຕຽນທີ່ແທ້ຈິງຫວັ່ນໄຫວໄດ້. ບັນດາຜູ້ທີ່ເຊື່ອຄວນສແວງຫາທຸກວິທີທາງທີ່ຈະຫາຄວາມຮູ້ເຣື່ອງພຣະເຈົ້າເພີ້ມເຕີມໃຫ້ເຂັ້ມແຂງຂຶ້ນແລະຖວາຍຕົວຢ່າງແທ້ຈິງເພື່ອຕໍ່ຕ້ານຄວາມຊົ່ວຮ້າຍໃນທຸກຮູບແບບ.

ສັດຮ້າຍຕົວທີສອງ (ຂໍ້ທີ 11) ປາກົດຂຶ້ນມາໃນໂລກ. ມັນເໝືອນກັບ "ລູກແກະ" ແຕ່ປາກເວົ້າຄືກັບ "ພຍານາກ" (ມັງກອນ) ໃນບົດທີ 16:13, 19:20 ແລະ 20:10, ມັນມາກັບ "ຜູ້ປະກາດພຣະທັມປອມ." ມັນໄດ້ຮັບຣິດອຳນາດຈາກຊາຕານ. ມັນສາມາດເຮັດການອັສຈັນອັນຫລອກລວງໄດ້ເໝືອນກັບສັດຮ້າຍຕົວທີນຶ່ງ. ມັນຫລອກລວງ (13:14) ນຳພາຄົນຈຳນວນຫລາຍນະມັສການຜູ້ຕໍ່ສູ້ພຣະຄຣິດ. ສິ່ງໃດກໍຕາມທີ່ຂໍ້ພຣະຄັມພີໄດ້ກ່າວໄວ້ກໍຖືກຕ້ອງແນ່ນອນ ເຮົາກໍຮູ້ຢ່າງແຈ່ມແຈ້ງຢູ່ແລ້ວ. ມາຮອດຈຸດນີ້ສິ່ງຊົ່ວຮ້າຍສາມປະການກໍໄດ້ຖືກປົດປ່ອຍມາສູ່ໂລກນີ້ຄື: ຊາຕານ, ຜູ້ຕໍ່ສູ້ພຣະຄຣິດ ແລະຜູ້ປະກາດພຣະທັມປອມ.

ອາວຸດອັນຊົ່ວຮ້າຍອັນນຶ່ງໃນສາງເຄື່ອງຂອງຜູ້ປະກາດພຣະທັມປອມແມ່ນເສຖກິດ. ມັນຕ້ອງການໃຫ້ທຸກຄົນໄດ້ຮັບ**ເຄື່ອງໝາຍ**ໄວ້ທີ່**ມືເບື້ອງຂວາ**ຫລື**ໜ້າຜາກ** ເພື່ອຈະໄດ້ຊື້ແລະຂາຍ. ບັນດາຜູ້ບໍ່ເຊື່ອພຣະເຈົ້າໃນໂລກນີ້ກໍເຄີຍໄດ້ຮັບຄວາມກຽດຊັງຈາກຊາຕານເທົ່າໆ ກັນກັບການປົກຄອງຂອງຜູ້ຕໍ່ສູ້ພຣະຄຣິດ. ທຸກຄົນຕ້ອງໄດ້ຮັບການປະທັບຕຣາຫລືຖືກໝາຍເປັນຍີ່ຫໍ້ໄວ້ໂດຍທີ່ບໍ່ມີຜູ້ໃດໄດ້ຮັບການຍົກເວັ້ນ.

ໃນ 2000 ປີທີ່ຜ່ານມາ ບໍ່ມີຕົວເລກໃດທີ່ໂດ່ງດັງເໝືອນເລກ 666. ຄວາມພຍາຍາມທີ່ຈະເຮັດໃຫ້ຕົວເລກດັ່ງກ່າວເປັນຕົວໜັງສືເພື່ອຈະສາມາດອ່ານອອກເປັນຊື່ຄົນນັ້ນບໍ່ປະສົບຜົນສຳເຣັດ. ຄວາມຊົ່ວຮ້າຍດັ່ງກ່າວນີ້ສາມາດຮູ້ໄດ້ດ້ວຍ**ສະຕິປັນຍາຝ່າຍວິນຍານແລະຄວາມເຂົ້າໃຈ**. ຄວາມສຳຄັນບາງຢ່າງສາມາດເຫັນໄດ້ໃນຖ້ອຍຄຳທີ່ວ່າເປັນ**ເລກຂອງບຸກຄົນຜູ້ນຶ່ງ**. ຜູ້ຕໍ່ສູ້ພຣະຄຣິດແມ່ນຄົນຜູ້ນຶ່ງ, ລາວບໍ່ແມ່ນພຣະເຈົ້າ. ຈົ່ງຣະວັງທຸກຄົນຜູ້ທີ່ຢາກໃຫ້ເຮົານະມັສການລາວ.

3. <u>ຜູ້ຂົ່ມເຫງ</u>: (ພຣະນິມິດ 13:7ກ, 9-10 )

ຄຣິສຕຽນມີປະສົບການໆ ຖືກຂົ່ມເຫັງມາຕລອດປະວັດສາດ. ເຖິງແມ່ນວ່າໃນສະຫະຣັດອະເມຣິກາຈະມີພຽງຈຳນວນໜ້ອຍໃນສມັຍໃໝ່ນີ້ ແຕ່ການຂົ່ມເຫັງຍັງມີຢູ່ຢ່າງຫລວງຫລາຍທົ່ວໂລກ. ການຂົ່ມເຫັງໄດ້ແຜ່ຂຍາຍອອກຢ່າງກວ້າງຂວາງໃນສມັຍຂອງຜູ້ເຊື່ອໃນສັຕວັດທີນຶ່ງ. ແບບຢ່າງຈາກເຂົາເຈົ້າສາມາດໜຸນໃຈຄົນອື່ນໃຫ້ມີຄວາມສັດຊື່ແລະອົດທົນໃນວັນສຸດທ້າຍ.

ຜູ້ຕໍ່ສູ້ພຣະຄຣິດໄດ້ຮັບອະນຸດຍາດໃຫ້ມີຊັຍຊະນະໃນການຕໍ່ສູ້ກັບບັນດາຜູ້ທີ່ຕິດຕາມພຣະຄຣິດ. ສິງຄາມເປັນສິ່ງທີ່ໜ້າຢ້ານກົວ ຊຶ່ງເວົ້າເຖິງຄວາມໂຫດຮ້າຍໃນການຕໍ່ສູ້ກັບໄພ່ພົນຂອງພຣະເຈົ້າຈາກຜູ້ເປັນບໍຣິວານຂອງຊາຕານ. ບັນດາຜູ້ທີ່ຖືກກຽດຊັງ, ຖືກຂົ່ມເຫັງ ແລະໄດ້ຮັບຊັຍຊະນະກໍແມ່ນໄພ່ພົນຂອງພຣະເຈົ້າ.

ຄຣິສຕຽນທີ່ຍອມຕາຍຍ້ອນຄວາມເຊື່ອກໍບໍ່ແມ່ນເຣື່ອງທີ່ແປກໃໝ່. ການໄດ້ຮັບ**ຊັຍຊະນະ**ໄດ້ຊີ້ໃຫ້ເຫັນແຈ້ງວ່າແມ່ນການຍອມຖືກຂ້າ. ໃນຂໍ້ທີ 10 ໄດ້ກ່າວເຖິງຄວາມຈິງດັ່ງກ່າວນີ້. ການຖືກກຳນົດໝາຍເຖິງການຖືກຂົ່ມເຫັງແລະພົບກັບຄວາມຕາຍທີ່ຫລີກລ້ຽງບໍ່ໄດ້. "ເພາະວ່າໄດ້ຖືກມອບໃຫ້ແກ່ທ່ານແລ້ວແທນອົງພຣະຄຣິດຊຶ່ງບໍ່ພຽງແຕ່ເຊື່ອໃນພຣະອົງເທົ່ານັ້ນ ແຕ່ຕ້ອງທົນທຸກທໍຣະມານເພື່ອເຫັນແກ່ພຣະອົງນຳ" (ຟລປ 1:29)

ເຖິງຢ່າງໃດກໍຕາມ, ຄຣິສຕຽນຈະຕ້ອງມີຄວາມອົດທົນ. ພຣະຄຸນຂອງພຣະເຈົ້າກໍມີພຽງພໍຢູ່ແລ້ວ, ເຖິງແມ່ນວ່າຈະປະເຊີນກັບຄວາມຕາຍຍ້ອນຄວາມເຊື່ອ. ພຣະຄັມພີພາກພຣະສັນຍາໃໝ່ສ່ວນຫລາຍໄດ້ຂຽນຂຶ້ນໃນຊ່ວງທີ່ມີການຂົ່ມເຫັງອັນໂຫດຮ້າຍທາຣຸນ. ໃນຊ່ວງເວລາດັ່ງກ່າວນັ້ນ ເປໂຕໄດ້ກ່າວວ່າ *"ແຕ່ເຖິງແມ່ນວ່າທ່ານທັງຫລາຍທົນທຸກເພາະໄດ້ເຮັດການຊອບທັມ ພວກທ່ານກໍເປັນສຸກ ແຕ່ຢ່າຊູ່ຢ້ານການທີ່ເຂົາເຮັດໃຫ້ພວກທ່ານສະດຸ້ງຕົກໃຈນັ້ນ ແລະຢ່າວິຕົກກັງວົນ."* ( 1 ເປໂຕ 3:14) ບັນດາຜູ້ທີ່ເປັນໄພ່ພົນຂອງພຣະຄຣິດກໍບໍ່ຄວນຈະຢ້ານຕາຍ. ພຣະຄຣິດຊົງໄດ້ຮັບຊັຍຊະນະແລ້ວ. ແຕ່ກໍມີເຫດຜົນຢູ່ວ່າ ຜູ້ທີ່ບໍ່ໄດ້ຮັບຄວາມລອດພົ້ນຈະປະເຊີນກັບຄວາມຕາຍດ້ວຍຄວາມຢ້ານກົວ. ເພາະວ່າເຂົາເຈົ້າບໍ່ຮູ້ຈັກກັບພຣະຄຣິດແລະຊັຍຊະນະທີ່ພຣະອົງຊົງໄດ້ຮັບ.

ຊັຍຊະນະຂອງພວກເຮົາແມ່ນອົງພຣະຄຣິດແລະຊັຍຊະນະຂອງພຣະອົງ. ຄວາມເຊື່ອຂອງບັນດາຜູ້ທີ່ເຊື່ອຄວນ

ມອບໄວ້ກັບພຣະອົງເທົ່ານັ້ນ. ຕາມທັມດາທົ່ວໆໄປນັ້ນແມ່ນ ຜູ້ທີ່ເປັນແຟນຂອງທີມກິລາຈະຍົກມືຂື້ນແກວ່ງໄປມາແລ້ວຮ້ອງຍ້ອງຍໍວ່າ "ພວກເຮົາຊະນະ, ພວກເຮົາຊະນະ" ພວກແຟນກິລາບໍ່ໄດ້ລົງຫລິ້ນແມ່ນແຕ່ວິນາທີດຽວ ແຕ່ແຟນທີ່ສັດຊື່ຈະມີຄວາມໃກ້ຊິດຕິດແທບກັບທີມກິລາຂອງເຂົາເຈົ້າ. ເພາະສະນັ້ນເມື່ອທີມກິລາຂອງເຂົາເຈົ້າໄດ້ຮັບຊັຍຊະນະບັນດາແຟນໆ ກໍໄດ້ຮັບຊັຍຊະນະນຳກັນ. ພຣະວິນຍານບໍຣິສຸດໄດ້ຊົງນຳພວກເຮົາໃຫ້ມີສ່ວນຮ່ວມອັນໃກ້ຊິດກັບອົງພຣະຄຣິດ ເມື່ອພຣະອົງໄດ້ຮັບຊັຍຊະນະ ພວກເຮົາກໍໄດ້ຮັບຊັຍຊະນະກັບພຣະອົງ. ຄວາມຕາຍຂອງຮ່າງກາຍຂອງພວກເຮົາຈະບໍ່ເຮັດໃຫ້ພວກເຮົາສູນເສັຽຊັຍຊະນະໄປ. ຜູ້ຕໍ່ສູ້ພຣະຄຣິດອາດຈະຂ້າພວກເຮົາໄດ້ ແຕ່ມັນຈະບໍ່ໄດ້ຮັບຊັຍຊະນະເລີຍ.

## ບົດຮຽນແຫ່ງຊີວິດ

ຫລາຍຄົນສັງເກດເຫັນວ່າມີຫລາຍສິ່ງໄດ້ມີການປ່ຽນແປງທີ່ຮ້າຍແຮງລົງ. ແຕ່ສິ່ງທີ່ຮ້າຍແຮງທີ່ສຸດກຳລັງຈະມາເຖິງ. ໃນວັນສຸດທ້າຍ ກ່ອນທີ່ພຣະເຢຊູຈະສະເດັດກັບມາ ຊາຕານຈະໃຊ້ຄວາມພຍາຍາມສຸດທ້າຍຂອງມັນ. ຜູ້ຕໍ່ສູ້ພຣະຄຣິດຈະເກີດຂື້ນແລະຈະມີຊັຍຊະນະຕໍ່ບັນດາໄພ່ພົນຂອງພຣະເຈົ້າ. ມັນຈະກົດຂີ່ຂົ່ມເຫັງຢ່າງໃຫຍ່ຫລວງ. ຄວາມປາຖນາຂອງມັນແມ່ນນຳຄົນທັງຫລາຍໃນໂລກໄປນະມັສການຊາຕານ.

ຜູ້ທີ່ເຊື່ອທຸກຄົນໄດ້ເອົາໃຈສຸມໃສ່ອະນາຄົດແລະການສະເດັດກັບມາຂອງອົງພຣະຄຣິດ. ຄຣິສຕຽນຈະກະກຽມຢ່າງໃດຕໍ່ອະນາຄົດ ບໍ່ວ່າຈະມີຫຍັງເກີດຂື້ນ? ເຖິງແມ່ນການກະທຳດັ່ງກ່າວຈະບໍ່ສຳເຣັດຢ່າງງ່າຍດາຍ ແຕ່ມັນຈະຊ່ອຍໃຫ້ທ່ານມີຊີວິດຢູ່ໂດຍເອົາພຣະເຢຊູເປັນສູນກາງ ແລະພຣະປະສົງຂອງພຣະອົງທີ່ມີຕໍ່ບັນດາຜູ້ທີ່ເຊື່ອທັງຫລາຍ.

ພຣະເຢຊູແລະພຣະປະສົງຂອງພຣະອົງທີ່ມີຕໍ່ໄພ່ພົນຂອງພຣະອົງມີດັ່ງນີ້

- ເອົາໃຈໃສ່ຕໍ່ການຮັບປະກັນຂອງພຣະຄັມພີ ດັ່ງນັ້ນທ່ານຈຶ່ງຈະໄດ້ຕຽມຕົວເພື່ອພົບກັບພຣະຄຣິດໃນເວລາທ່ານອຳລາຈາກໂລກນີ້ຫລືເວລາພຣະອົງສະເດັດກັບມາ
- ຈື່ໄວ້ວ່າ ການທີ່ຈະຮູ້ຈັກຜູ້ຕໍ່ສູ້ພຣະຄຣິດ ຕ້ອງມີສະຕິປັນຍາທີ່ມາຈາກພຣະເຈົ້າບໍ່ແມ່ນມາຈາກຄວາມຮູ້
- ເຂົ້າໃຈວ່າເປົ້າໝາຍຂອງຊາຕານແມ່ນຢາກໃຫ້ເຮົານະມັສການມັນ ຊຶ່ງພຣະເຈົ້າເທົ່ານັ້ນທີ່ສົມຄວນເປັນຜູ້ໄດ້ຮັບການນະມັສການຈາກເຮົາ.
- ຕຽມພ້ອມທີ່ຈະຕໍ່ຕ້ານຄວາມຊົ່ວຮ້າຍໃນທຸກຮູບແບບ ຊຶ່ງອາດຈະລວມທັງຣາຍການໂທຣະທັດ, ອິນເຕີແນັດ, ຫລືລາຍການບັນເທີງອື່ນໆ

ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ www.lsbf.org. ແປແລະຮຽບຮຽງໂດຍ PS